ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 286 /ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 25 DEC 2014

ເຖິງ: - ບັນດາພາກສ່ວນຕ່າງໆ ( ທັງພາກລັດ ແລະ ເອກະຊົນ)

- ວິສາຫະກິດທີ່ກ່ຽວຂ້ອງ

ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ ບໍລິສັດ ພີທີເອັດສ໌ ກຣຸບ ຈຳກັດ

- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ກົດໝາຍວ່າດ້ວຍການສ່ວຍສາອາກອນ ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011;
- ອີງຕາມ ແຈ້ງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພນ,ລົງວັນທີ 09 ກັນຍາ 2011 ຂອງກະຊວງອຸດສາຫະກຳ ແລະ ການຄ້າ
- ອີງຕາມ ໜັງສືສະບັບເລກທີ 0981/ກງ.ກສອ, ລົງວັນທີ 19 ທັນວາ 2014 ຂອງກົມສ່ວຍສາອາກອນ ກະຊວງການເງິນ.

ບົນພື້ນຖານ ໜັງສືສະບັບເລກທີ 0981/ກງ.ກສອ, ລົງວັນທີ 19 ທັນວາ 2014; ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ບໍລິສັດ ພີທີເອັດສ໌ ກຣຸບ ຈຳກັດ ທະບຽນວິສາຫະກິດເລກທີ 9599/ທຈທ, ລົງວັນທີ 9 ທັນວາ 2009 ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຖາວອນໃນທຸກປະເພດທຸລະກິດ ຕາມທີ່ໄດ້ບົ່ງໄວ້ໃນດ້ານຫຼັງໃບທະບຽນວິສາຫະກິດ;
2. ການໂຈະການເຄື່ອນໄຫວທຸລະກິດຖາວອນນີ້ ແມ່ນມີຜົນປະຕິບັດນັບແຕ່ວັນທີ 25 ທັນວາ 2014 ເປັນຕົ້ນໄປ;
3. ການໂຈະການເຄື່ອນໄຫວທຸລະກິດຖາວອນ ມີຜົນຕໍ່ວິສາຫະກິດດັ່ງກ່າວ ດັ່ງນີ້:
   - 3.1 ຕ້ອງດຳເນີນການຍຸບເລີກ ຕາມຂັ້ນຕອນ ແລະ ກຳນົດເວລາທີ່ບົ່ງໄວ້ໃນກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ 2013);
   - 3.2 ບໍ່ສາມາດເຄື່ອນໄຫວທຸລະກິດໄດ້, ໃນກໍລະນີລະເມີດຈະຖືກປະຕິບັດມາດຕະການຢ່າງເຂັ້ມງວດ ຕາມມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ 2013);
   - 3.3 ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດທີ່ກ່ຽວຂ້ອງ ເກັບຮັກສາໄວ້. ກໍລະນີ ບຸກຄົນ ຫຼື ນິຕິບຸກຄົນໃດ ຫາກນຳໃບທະບຽນວິສາຫະກິດຂອງວິສາຫະກິດດັ່ງກ່າວໄປນຳໃຊ້ ນອກຈາກຈະຖືກປະຕິບັດມາດຕະການ ຕາມຂໍ້ 3.2 ຖັດເທິງນີ້ແລ້ວ ຍັງຕ້ອງຮັບຜິດຊອບທັງໝົດຕໍ່ໜ້າກົດໝາຍ ຈາກຜົນເສຍຫາຍທີ່ຕົນໄດ້ສ້າງຂຶ້ນ.

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ບ່ອນສົ່ງ
- ຫ້ອງວ່າການລັດຖະບານ 1 ສະບັບ;
- ກົມສ່ວຍສາອາກອນ 1 ສະບັບ;
- ສະພາການຄ້າ ແລະ ອຸດສາຫະກຳ 1 ສະບັບ;
- ຫ້ອງວ່າການນະຄອນຫຼວງ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ສຳເນົາ 1 ສະບັບ.

ພູວົງ ສີທອນວົງ